ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

5 1 8 - - - - -

ເລກທີ /ຫກ

ນະຄອນຫຼວງວຽງຈັນ, ວັນທີ 0 6 FEB 2023

## ໜັງສືແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນການຈັດຊື້ເຄື່ອງຄອມພິວເຕີ ແລະ ເຄື່ອງສາຍໄປເຈັກເຕີ (ປະກອບຫ້ອງຮຽນຄອມພິວເຕີ) ສະໜອງແຈກຢາຍໃຫ້ແກ່ໂຮງຮຽນມັດທະຍົມສົມບູນ ເປົ້າໝາຍ 5 ແຫ່ງ ຢູ່ 5 ແຂວງ ໂດຍນຳໃຊ້ງົບປະມານແຫ່ງລັດ ປະຈຳປີ 2023. ສຳເລັດພາຍໃນ 04 ເດືອນ ຫຼັງຈາກເຊັນສັນຍາ (ລາຍລະອຽດຕ່າງໆ ລວມທັງເງື່ອນໄຂການປະມູນໄດ້ຄັດຕິດໃນເອກະສານການປະມູນ);
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ສຳນັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ, ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ ຖະໜົນລ້ານຊ້າງ (ເຂດສີສະເກດ) ໂທລະສັບ: 021 255253, 020 22565174 ຕາມວັນເວລາລັດຖະການ;
5. ເອກະສານປະມູນຄົບຊຸດສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນໜັງສືສະເໜີຫາ ສຳນັກພິມສຶກສາ ແລະ ກິລາ ກະຊວງສຶກສາທິການ ແລະ ກິລາ, ເລີ່ມແຕ່ວັນທີ ..11..2..2023........ ເປັນຕົ້ນໄປ, ໃນລາຄາຊຸດລະ 1.000.000 ກີບ (ໜຶ່ງລ້ານກີບ) ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ ຫລື ເຊັກເງິນສົດ;
6. ຊອງປະມູນຕ້ອງສົ່ງ ທີ່ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ (ເຂດສີສະເກດ) ເວລາ 9 : 00 ໂມງ ຫຼື ກ່ອນເວລາ 9:00 ໂມງ ຂອງວັນທີ ...17..3..2023...... ທີ່ກຳນົດເປັນເວລາຊ້າສຸດໃນການຍື່ນຊອງປະມູນ. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ;
7. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 9:00 ໂມງ ຂອງວັນທີ .17..3..2023....... ຢູ່ທີ່ ຫ້ອງປະຊຸມກະຊວງສຶກສາທິການ ແລະ ກິລາ (ເຂດສີສະເກດ ) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ;
8. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກາງດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ;
9. ທີ່ຢູ່ຕາມທີ່ຢູ່ຂ້າງເທິງແມ່ນ: ເຖິງ: ສຳນັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ
ທີ່ຕັ້ງຂອງຫ້ອງການ : ສຳນັກພິມສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນລ້ານຊ້າງ ຕູ້ໄປສະນີ 067 (ເຂດສີສະເກດ) ບ້ານຊຽງຍືນ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ, ໂທລະສັບ: 021 255253; 020 22565174

**ຫົວໜ້າຫ້ອງການ**

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ນ.ດາລາວອນ ກິດຕິພັນ

CS Scanned with CamScanner